ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສໍານັກງານ ຄຄຊ
ພະແນກຈັດຕັ້ງ ແລະ ບໍລິຫານ

ນະຄອນຫຼວງວຽງຈັນ, ວັນທີ: 11 / 10 /2016.

**ຮຽນ: ຄະນະກົມ, ຄະນະພະແນກ ແລະ ວິຊາການ ພາຍໃນສໍານັກງານ ຄຄຊ;**
**ເລື່ອງ: ເຕືອນໄພໄວຣັສຄອມພິວເຕີໂຕໃໝ່;**

- ອີງຕາມການແຈ້ງເຕືອນກ່ຽວກັບອັນຕະລາຍຈາກໄວຣັສ Cerber3;

ຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ ຂໍແຈ້ງມາຍັງ ຄະນະກົມ, ຄະນະພະແນກ ແລະ ວິຊາການ ພາຍໃນສໍານັກງານ ຄຄຊ ກ່ຽວກັບໄວຣັສຄອມພິວເຕີໂຕໃໝ່ ທີ່ມີຊື່ວ່າ: "Cerber3" ເຊິ່ງເປັນໄວຣັສສາຍພັນ Ransomware ເຊິ່ງຖືກພັດທະນາຂຶ້ນມາເປັນລຸ້ນທີ 3 ແຕ່ມີຄວາມສາມາດສູງ. ການເຮັດວຽກຂອງໄວຣັສ Cerber3 ນັ້ນຈະຄ້າຍຄືກັນກັບການຈັບໂຕປະກັນເພື່ອເອີ້ນເອົາເງິນນໍາຜູ້ທີ່ຕິດໄວຣັສ ເຊິ່ງເມື່ອຄອມພິວເຕີ້ຂອງຜູ້ໃຊ້ຄົນໃດຕິດໄວຣັສໂຕນີ້ ຂໍ້ມູນຈະຖືກເຂົ້າລະຫັດໄວ້ ເຮັດໃຫ້ຜູ້ໃຊ້ບໍ່ສາມາດນໍາໃຊ້ຂໍ້ມູນຂອງຕົນເອງໄດ້ ແລະ ຖ້າຫາກຜູ້ໃຊ້ຕ້ອງການນໍາໃຊ້ຂໍ້ມູນຂອງຕົນເອງ ກໍ່ມີພຽງແຕ່ວິທີດຽວເທົ່ານັ້ນຄື ຕ້ອງໄດ້ຈ່າຍເງິນໃຫ້ແກ່ແຮັກເກີ້ທີ່ເປັນເຈົ້າຂອງໄວຣັສ ເພື່ອໃຫ້ເປັນຄົນແກ້ໄຂໃຫ້ ເພາະປະຈຸບັນຍັງບໍ່ທັນມີເຄື່ອງມືໃດທີ່ສາມາດກໍາຈັດໄວຣັສດັ່ງກ່າວນີ້ໄດ້ເທື່ອ ສ່ວນວ່າຜູ້ໃຊ້ຈະໄດ້ເສຍເງິນເປັນຈໍານວນໜ້ອຍ ຫຼື ຫຼາຍນັ້ນ ແມ່ນຂຶ້ນກັບຈໍານວນຂໍ້ມູນທີ່ຕິດໄວຣັສ.

ເນື່ອງຈາກວ່າໃນປະຈຸບັນນີ້ຍັງບໍ່ທັນມີເຄື່ອງມືໃນການກໍາຈັດໄວຣັສໂຕນີ້ເທື່ອ ສະນັ້ນ ວິທີທີ່ດີທີ່ສຸດໃນຕອນນີ້ແມ່ນ ຜູ້ໃຊ້ຈະຕ້ອງໄດ້ປ້ອງກັນຄອມພິວເຕີ້ຂອງຕົນເອງ ເພື່ອບໍ່ໃຫ້ຕິດໄວຣັສດັ່ງກ່າວ ຫຼື ຫຼຸດຜ່ອນຄວາມສ່ຽງທີ່ອາດຈະເຮັດໃຫ້ຄອມພິວເຕີ້ຕິດໄວຣັສດັ່ງກ່າວ ໂດຍປະຕິບັດຕາມຄໍາແນະນໍາເບື້ອງຕົ້ນດັ່ງລຸ່ມນີ້:

1. ນໍາໃຊ້ໂປຣແກຣມ Windows Defender ຫຼື ໂປຣແກຣມ Anti Virus ທີ່ເປັນລິຂະສິດ (ຂອງແທ້) ພ້ອມທັງ Update ທຸກວັນ ແລະ Scan ທຸກວັນ ຫຼື ຢ່າງໜ້ອຍອາທິດລະຄັ້ງ;
2. ບໍ່ໃຫ້ເປີດ Email ທີ່ຕົນເອງບໍ່ຮູ້ຈັກ, ບໍ່ເຂົ້າເວັບໄຊທ໌ທີ່ມີຄວາມສ່ຽງ ແລະ ບໍ່ກົດເຂົ້າໂຄສະນາຕ່າງໆທີ່ອາດຈະເປັນອັນຕະລາຍ ຫຼື ບໍ່ໜ້າໄວ້ວາງໃຈ;
3. ບໍ່ດາວໂຫລດໂປຣແກຣມ ຫຼື ຂໍ້ມູນຕ່າງໆທີ່ບໍ່ໜ້າເຊື່ອຖືເຊິ່ງອາດຈະມີໄວຣັສຂັດຕິດມາພ້ອມ;
4. Scan Flash Drive ແລະ ອຸປະກອນເກັບຂໍ້ມູນພາຍນອກ ທຸກໆຄັ້ງທີ່ເຊື່ອມຕໍ່ກັບຄອມພິວເຕີ້;
5. ສິ່ງສໍາຄັນທີ່ສຸດຜູ້ໃຊ້ ຕ້ອງສໍາເນົາຂໍ້ມູນທີ່ສໍາຄັນຂອງຕົນເອງ ເກັບໄວ້ໃນອຸປະກອນເກັບຂໍ້ມູນອື່ນຫຼາຍບ່ອນ ແລະ ປັບປຸງໃຫ້ເປັນປະຈຸບັນຢູ່ສະເໝີ ເພື່ອເປັນການສໍາຮອງຂໍ້ມູນກໍລະນີຄອມພິວເຕີເກີດການຕິດເຊື້ອ ຂໍ້ມູນເຮົາກໍ່ຈະບໍ່ສູນຫາຍ;

6. ຖ້າສັງເກດເຫັນວ່າຄອມພິວເຕີຂອງຕົນເອງມີອາການຜິດປົກກະຕິເຊັ່ນ: ເຮັດວຽກຊ້າຫຼາຍ, ເຮັດວຽກຜິດພາດ, ມີໂຄສະນາຕ່າງໆຂຶ້ນມາ, ມີຟາຍທີ່ບໍ່ຮູ້ຈັກຖືກສ້າງຂຶ້ນມາອັດຕະໂນມັດ, ຄອມພິວເຕີສະແດງຂໍ້ຄວາມຕ່າງໆເອງ ແລະ ອື່ນໆ ແມ່ນໃຫ້ແຈ້ງພະນັກງານໄອທີເພື່ອກວດສອບ ຢ່າງຮີບດ່ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ

ລໍເພັນ ສົມພາໄລວົງ